ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກໍາມະການແຫ່ງຊາດເພື່ອຕ້ານການຟອກເງິນ

ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ເລກທີ 01 /ຄຕຟງ

ນະຄອນຫຼວງວຽງຈັນ, ວັນທີ 08 JAN 2020

# ຄໍາສັ່ງແນະນໍາ

## ວ່າດ້ວຍການດໍາເນີນຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

- ອີງຕາມ ກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014;
- ອີງຕາມ ປະມວນກົດໝາຍອາຍາ ສະບັບເລກທີ 26/ສພຊ, ລົງວັນທີ 17 ພຶດສະພາ 2017;
- ອີງຕາມ ກົດໝາຍວ່າດ້ວຍ ການດໍາເນີນຄະດີອາຍາ ສະບັບ ເລກທີ 37/ສພຊ, ລົງວັນທີ 14 ພະຈິກ 2017;
- ອີງຕາມ ຄໍາສັ່ງວ່າດ້ວຍການກັກ, ການຍຶດ ແລະ ອາຍັດ ທຶນທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ກາຍຮ້າຍ ສະບັບເລກທີ 03/ນຍ, ລົງວັນທີ 11 ກຸມພາ 2016;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະສະເພາະກິດຮັບຜິດຊອບການປະເມີນວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງ ສປປ ລາວ ໃນປີ 2019-2021 ສະບັບເລກທີ 90/ນຍ, ລົງວັນທີ 16 ຕຸລາ 2019;
- ອີງຕາມ ຄໍາແນະນໍາວ່າດ້ວຍການນໍາໃຊ້ມາດຕະການຊົ່ວຄາວ ຕໍ່ກັບຊັບສິນທີ່ພົວພັນກັບການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 08/ຄຕຟງ, ລົງວັນທີ 30 ມີນາ 2016;
- ອີງຕາມ ແຈ້ງການແນະນໍາດ້ວຍການຈັດຕັ້ງປະຕິບັດກອງປະຊຸມປຶກສາຫາລື ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 03/ຄຕຟງ,ລົງວັນທີ 10 ມັງກອນ 2019.

ພາຍຫຼັງທີ່ມີກົດໝາຍ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ກ່ຽວກັບ ການດໍາເນີນຄະດີຟອກເງິນ ແລະການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແຕ່ເຫັນວ່າບັນດາກົດໝາຍ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການຕ່າງໆນັ້ນຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດຢ່າງມີປະສິດທິພາບເທື່ອ. ສະນັ້ນ, ເພື່ອຕອບສະໜອງຄວາມຕ້ອງການຂອງວຽກງານ, ເປັນບ່ອນອີງໃຫ້ແກ່ພະນັກງານທີ່ກ່ຽວຂ້ອງ ໃນການດໍາເນີນຄະດີ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໂດຍສະເພາະ ເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານໄອຍະການ, ຜູ້ພິພາກສາ ແລະ



Scanned by CamScanner

ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໄດ້ຈັດຕັ້ງປະຕິບັດຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ, ຊ່ວຍໃຫ້ການປະເມີນສະຖານະພາບຂອງ ສປປ ລາວ ກ່ຽວກັບການດຳເນີນຄະດີການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃນປີ 2019-2021 ໄດ້ມີສະຖິຕິ, ຕົວເລກ ແລະ ຂໍ້ມູນ ກ່ຽວກັບການດຳເນີນຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

**ຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ຈຶ່ງອອກຄຳສັ່ງແນະນຳ ດັ່ງນີ້:**

## ໝວດທີ 1
## ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ຄຳສັ່ງແນະນຳສະບັບນີ້ ກຳນົດຫຼັກການ, ລະບຽບການ, ວິທີການ ແລະ ຂັ້ນຕອນ ຂອງການສືບສວນ-ສອບສວນ, ການສັ່ງຟ້ອງຜູ້ຖືກຫາ, ການຕັດສິນ ແລະ ການຈັດຕັ້ງປະຕິບັດຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ ກ່ຽວກັບ ຄະດີການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເພື່ອຮັບປະກັນການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳອື່ນ ທີ່ກ່ຽວຂ້ອງ ກັບວຽກງານການຕ້ານ ການສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແນໃສ່ໃຫ້ອົງການດຳເນີນຄະດີອາຍາ ມີບ່ອນອີງ ໃນການຈັດຕັ້ງປະຕິບັດຢ່າງມີປະສິດທິພາບ.

ມາດຕາ 2 ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ການຟອກເງິນ ແມ່ນການປ່ຽນຮູບ, ນຳໃຊ້, ເຄື່ອນຍ້າຍ, ແລກປ່ຽນ, ໄດ້ມາ, ຄອບຄອງ, ໂອນກຳມະສິດທີ່ແທ້ຈິງ ຂອງເງິນ ຫຼື ຊັບສິນອື່ນ ທີ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໂດຍທີ່ຮູ້, ໄດ້ຮູ້ ຫຼື ສົງໄສວ່າ ເງິນ ຫຼື ຊັບສິນນັ້ນ ມາຈາກການກະທຳຜິດຕົ້ນ ເພື່ອປົກປິດ ຫຼື ຊຸກເຊື່ອງ ຄຸນລັກສະນະ, ທີ່ມາຂອງເງິນ, ທີ່ຕັ້ງຂອງຊັບສິນ ເພື່ອເຮັດໃຫ້ເງິນ ຫຼື ຊັບສິນດັ່ງກ່າວ ຖືກຕ້ອງຕາມກົດໝາຍ.

ສຳລັບການກະທຳທີ່ເປັນການຟອກເງິນ ໄດ້ກຳນົດໄວ້ໃນມາດຕາ 6 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບປີ 2014.

ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແມ່ນ ການເຄື່ອນໄຫວໂດຍເຈດຕະນາ ທັງທາງກົງ ແລະ ທາງອ້ອມ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ພະຍາຍາມໃຫ້, ຮິບໂຮມ, ຈັດຫາທຶນ ທີ່ຖືກຕ້ອງ ຫຼື ບໍ່ຖືກຕ້ອງ, ທັງໝົດ ຫຼື ບາງສ່ວນ ເພື່ອສະໜອງໃຫ້ແກ່ການກໍ່ການຮ້າຍ ຫຼື ຜູ້ກໍ່ການຮ້າຍ ຫຼື ການກະທຳທີ່ພົວພັນກັບ ການກໍ່ການຮ້າຍ ໂດຍສະເພາະ ເຖິງວ່າທຶນນັ້ນ ຈະຖືກນຳໃຊ້ ຫຼື ບໍ່ນຳໃຊ້ ເຂົ້າໃນການກະທຳຕົວຈິງກໍຕາມ.

ສຳລັບການກະທຳທີ່ເປັນການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໄດ້ກຳນົດໄວ້ໃນມາດຕາ 7 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບປີ 2014.



Scanned by CamScanner

ມາດຕາ 3 ອະທິບາຍຄຳສັບ

ຄຳຊັບທີ່ໃຊ້ໃນຄຳສັ່ງແນະນຳສະບັບນີ້ ມີຄວາມໝາຍດັ່ງລຸ່ມນີ້:

1. **ອົງການດຳເນີນຄະດີອາຍາ** ໝາຍເຖິງ ອົງການສືບສວນ-ສອບສວນ, ອົງການໄອຍະການ ແລະ ສານ;
2. **ການກະທຳຜິດຕົ້ນ** ໝາຍເຖິງ ການກະທຳຜິດທາງອາຍາ ທັງໝົດ ຊຶ່ງເປັນຕົ້ນເຫດຂອງການຟອກເງິນ ລວມທັງການກະທຳຜິດນອກດິນແດນ ສປປ ລາວ ທີ່ກໍ່ໃຫ້ເກີດມີຜົນຈາກການກະທຳຜິດຕົ້ນ ມີຄື ການສໍ້ໂກງຊັບ; ການປຸ້ນຊັບ ຫຼື ການລັກຊັບ; ການຄາດຕະກຳ ແລະ ການທຳຮ້າຍຮ່າງກາຍ; ການລັກພາຕົວ, ການກັກຂັງ ແລະ ການຈັບເປັນຕົວປະກັນ; ການຊື້-ຂາຍຊັບທີ່ຜິດກົດໝາຍ; ການປອມແປງເງິນ ຫຼື ການໃຊ້ເງິນປອມ ລວມທັງການປອມແປງແຊັກ, ການໃຊ້ແຊັກ ຫຼື ພັນທະບັດປອມ; ການປອມແປງເອກະສານ ຫຼື ການໃຊ້ເອກະສານປອມ; ການລະເມີດຊັບສິນທາງປັນຍາ; ການສໍ້ລາດບັງຫຼວງ ລວມທັງການຮັບສິນບົນ ແລະ ການໃຫ້ສິນບົນ; ການຄ້າໂສເພນີ ຜູ້ໃຫຍ່ ແລະ ເດັກ; ການຄ້າມະນຸດ, ການຂົນຂວາຍສົ່ງຄົນອອກ ຫຼື ການເອົາຄົນເຂົ້າປະເທດ; ການຜະລິດ ແລະ ຄ້າຂາຍຢາເສບຕິດ; ການຊື້-ຂາຍ ອາວຸດເສິກ ຫຼື ວັດຖຸລະເບີດ; ການເຂົ້າຮ່ວມໃນກຸ່ມອົງການອາຊະຍາກຳ ແລະ ກຸ່ມຄົນທີ່ເກັບຄ່າຄຸ້ມຄອງ; ການກໍ່ການຮ້າຍ ລວມທັງການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ອາຊະຍາກຳທາງດ້ານສິ່ງແວດລ້ອມ; ອາຊະຍາກຳທາງດ້ານອາກອນ; ການຊື້-ຂາຍຂໍ້ມູນພາຍໃນ ແລະ ການປັ່ນຕະຫຼາດ; ການລະເມີດລະບຽບການກ່ຽວກັບລະບອບພາສີ, ອາກອນຂອງລັດ; ການບັງຄັບນາບຂູ່ເອົາຊັບ; ການເປັນໂຈນສະລັດ ແລະ ອື່ນໆ.

ມາດຕາ 4 ນະໂຍບາຍ

ນະໂຍບາຍກ່ຽວກັບວຽກງານ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍວ່າດ້ວຍ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບປີ 2014.

ມາດຕາ 5 ຫຼັກການພື້ນຖານກ່ຽວກັບການດຳເນີນຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ການດຳເນີນຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໃຫ້ປະຕິບັດດັ່ງດຽວກັນກັບຫຼັກການພື້ນຖານ ຕາມທີ່ກຳນົດໄວ້ໃນມາດຕາ 10 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບ ປັບປຸງ ປີ 2017.

## ໝວດທີ 2

## ການສືບສວນ-ສອບສວນຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ມາດຕາ 6 ອົງການສືບສວນ-ສອບສວນ

ອົງການສືບສວນ-ສອບສວນ ໄດ້ກຳນົດໄວ້ໃນມາດຕາ 46 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ 2017 ມີດັ່ງນີ້:

1. ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ຕຳຫຼວດ;



Scanned by CamScanner

2. ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ທະຫານ;
3. ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ພາສີ, ອາກອນ;
4. ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້;
5. ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ຕ້ານການສໍ້ລາດບັງຫຼວງ;
6. ອົງການສືບສວນ-ສອບສວນ ຂອງພາກສ່ວນອື່ນທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 7 ສິດ ແລະ ໜ້າທີ່ຂອງອົງການສືບສວນ-ສອບສວນ

ສິດ ແລະ ໜ້າທີ່ ຂອງອົງການສືບສວນ-ສອບສວນ ນອກຈາກທີ່ກຳນົດໄວ້ໃນມາດຕາ 47 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ 2017 ແລະ ນິຕິກຳອື່ນ, ຍັງມີສິດ ແລະ ໜ້າທີ່ ໃນການສືບສວນ-ສອບສວນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕາມທີ່ກຳນົດໄວ້ໃນຄຳສັ່ງແນະນຳສະບັບນີ້.

### ມາດຕາ 8 ການເປີດ ຫຼື ບໍ່ເປີດ ການສືບສວນ-ສອບສວນ

ໃນການດຳເນີນການສືບສວນ-ສອບສວນ ໃຫ້ປະຕິບັດຕາມ ພາກທີ V ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ 2017.

ການເປີດ ຫຼື ບໍ່ເປີດ ການສືບສວນ-ສອບສວນ ໃຫ້ປະຕິບັດຕາມມາດຕາ 84, 85, 90, 91 ແລະ 92 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ 2017.

ເມື່ອອອກຄຳສັ່ງເປີດການສືບສວນ-ສອບສວນ ການກະທຳຜິດຕົ້ນ ແລ້ວ ຫາກພົບເຫັນຮ່ອງຮອຍ ຂອງການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ນັ້ນ ອົງການສືບສວນ-ສອບສວນ ຕ້ອງປັ່ງປແປງ ຫຼື ເພີ່ມເຕີມ ຄຳສັ່ງເປີດການສືບສວນ-ສອບສວນ ໃນຂໍ້ກ່າວຫາ ການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕື່ມອີກ.

ໃນກໍລະນີທີ່ອົງການສືບສວນ-ສອບສວນ ອອກຄຳສັ່ງບໍ່ເປີດການສືບສວນ-ສອບສວນ ໃນຂໍ້ກ່າວຫາການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໂດຍບໍ່ມີເຫດຜົນພຽງພໍ ແຕ່ຜ່ານການກວດກາຂອງອົງການໄອຍະການ ຫາກພົບເຫັນຮ່ອງຮອຍ ຂອງການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍນັ້ນ ຫົວໜ້າອົງການໄອຍະການ ຕ້ອງລົບລ້າງຄຳສັ່ງບໍ່ເປີດການສືບສວນ-ສອບສວນ ຂອງອົງການສືບສວນ-ສອບສວນ ແລະ ອອກຄຳສັ່ງເປີດການສືບສວນ-ສອບສວນ ດ້ວຍຕົນເອງ ແລ້ວສົ່ງຄຳສັ່ງດັ່ງກ່າວ ໃຫ້ອົງການສືບ ສວນ-ສອບສວນ ເປັນຜູ້ດຳເນີນການສືບສວນ-ສອບສວນ ຕາມທີ່ກຳນົດໄວ້ໃນມາດຕາ 94 ວັກສາມ ແລະ 95 ວັກ ສາມ ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ 2017.

ການປັ່ງປແປງ ຫຼື ເພີ່ມເຕີມ ຄຳສັ່ງເປີດການສືບສວນ-ສອບສວນ ໃຫ້ປະຕິບັດຕາມມາດຕາ 91 ວັກ ຫ້າ, ຫົກ, ເຈັດ ແລະ ແປດ ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ 2017.

ສຳລັບບົດລາຍງານຂ່າວກອງທາງດ້ານການເງິນ ຂອງສຳນັກງານຂໍ້ມູນຕ້ານການຟອກເງິນ ທີ່ສົ່ງໃຫ້ອົງການສືບສວນ-ສອບສວນນັ້ນ ເປັນການແຈ້ງຄວາມ ສະນັ້ນ, ອົງການສືບສວນ-ສອບສວນ ຕ້ອງອອກຄຳສັ່ງເປີດການສືບສວນ-ສອບສວນ ຫຼື ບໍ່ເປີດການສືບສວນ-ສອບສວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 90, 91 ແລະ 92 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ 2017.



Scanned by CamScanner

ມາດຕາ 9 ວິທີການສືບສວນ-ສອບສວນ

ອົງການສືບສວນ-ສອບສວນ ແລະ ອົງການໄອຍະການ ໃຫ້ນຳໃຊ້ວິທີການສືບສວນ-ສອບສວນ ຕາມຄູ່ມືການດຳເນີນຄະດີອາຍາ ແລະ ພາກທີ VI, ໝວດທີ 1, 2 ແລະ 3 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ 2017.

ການສືບສວນ-ສອບສວນການກະທຳຜິດຕົ້ນ ຕ້ອງດຳເນີນຄຽງຄູ່ກັບການສືບສວນ-ສອບສວນ ການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຊຶ່ງອີງໃສ່ ຂໍ້ມູນ, ຫຼັກຖານ ແລະ ທຸລະກຳ ທາງດ້ານການເງິນ ຫຼື ຊັບສິນອື່ນ ທີ່ເກີດຂຶ້ນໃນໄລຍະທີ່ມີການກະທຳຜິດຕົ້ນ ໂດຍອີງໃສ່ການກະທຳທີ່ກຳນົດໄວ້ໃນມາດຕາ 2 ຂອງຄຳສັ່ງແນະນຳສະບັບນີ້.

ມາດຕາ 10 ມາດຕະການສະກັດກັ້ນ, ການໂຈະ, ການຊັດມັງູນ ແລະ ການສິ້ນສຸດ ການສືບສວນສອບ-ສອບສວນ

ມາດຕະການສະກັດກັ້ນ, ການໂຈະ, ການຊັດມັງູນ ແລະ ການສິ້ນສຸດ ການສືບສວນສອບ-ສອບສວນ ໃຫ້ປະຕິບັດຕາມພາກທີ VI, ໝວດທີ 4 ແລະ 5 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ 2017.

ນອກຈາກນີ້, ຕ້ອງໃຫ້ປະຕິບັດຕາມມາດຕາ 38 ແລະ 40 ຂອງກົດໝາຍ ວ່າດ້ວຍການຕ້ານ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບປີ 2014 ແລະ ຄຳແນະນຳ ສະບັບເລກທີ 08/ຄຕຟງ, ລົງວັນທີ 30 ມີນາ 2016 ວ່າດ້ວຍ ການນຳໃຊ້ມາດຕະການຊົ່ວຄາວ ຕໍ່ກັບຊັບສິນທີ່ພົວພັນກັບການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ຄຳສັ່ງ ສະບັບເລກທີ 03/ຄຕຟງ, ລົງວັນທີ 11 ກຸມພາ 2016 ວ່າດ້ວຍການກັກ, ການຍຶດ ແລະ ອາຍັດ ທຶນທີ່ພົວພັນກັບຜູ້ກໍ່ການຮ້າຍ ຫຼື ການສະໜອງທຶນໃຫ້ແກ່ການກໍ່ກາຍຮ້າຍ.

ມາດຕາ 11 ບົດສະຫຼຸບຜົນຂອງການສືບສວນ-ສອບສວນ

ບົດສະຫຼຸບຜົນຂອງການສືບສວນ-ສອບສວນ ຄະດີອາຍາ ປະຕິບັດຕາມມາດຕາ 150 ຂອງກົດໝາຍວ່າດ້ວຍການ ດຳເນີນຄະດີອາຍາ ສະບັບປັບປຸງ 2017.

ສຳລັບ ບົດສະຫຼຸບຜົນຂອງການສືບສວນ-ສອບສວນ ຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍນັ້ນ ອົງການສືບສວນ-ສອບສວນ ຕ້ອງປະກອບສຳນວນຄະດີ ສະເໜີໃຫ້ອົງການໄອຍະການສັ່ງຟ້ອງ ຄະດີດັ່ງກ່າວ ໃຫ້ສານຕັດສີນຕາມກົດໝາຍ.

ມາດຕາ 12 ການເກັບກຳສະຖິຕິຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງອົງການສືບສວນ-ສອບສວນ

ວິທີການເກັບສະຖິຕິ ແມ່ນປະຕິບັດຕາມຕາຕະລາງຊ້ອນທ້າຍ ຄຳແນະນຳສະບັບນີ້.

## ໝວດທີ 3

## ການພິຈາລະນາບົດສະຫຼຸບຜົນການສືບສວນ-ສອບສວນຄະດີ ແລະ ການສັ່ງຟ້ອງ ຄະດີຟອກເງິນ ແລະ ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ຂອງອົງການໄອຍະການ



Scanned by CamScanner

ມາດຕາ 13 ການຄົ້ນຄວ້າຄະດີ ແລະ ລົງຄຳເຫັນຂອງຫົວໜ້າອົງການໄອຍະການ

ການຄົ້ນຄວ້າຄະດີ, ລົງຄຳເຫັນ ແລະ ການສົ່ງສຳນວນຄະດີຄືນ ເພື່ອໃຫ້ສືບສວນ-ສອບສວນເພີ່ມເຕີມ ຂອງຫົວໜ້າອົງການໄອຍະການ ໃຫ້ປະຕິບັດຕາມມາດຕາ 152 ແລະ 153 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ 2017.

ມາດຕາ 14 ການສັ່ງຟ້ອງຜູ້ຖືກຫາໃນຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ການສັ່ງຟ້ອງຜູ້ຖືກຫາ ໃຫ້ປະຕິບັດຕາມມາດຕາ 154, 155 ແລະ 156 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບປັບປຸງ 2017.

ມາດຕາ 15 ການເກັບກຳສະຖິຕິການສັ່ງຟ້ອງກ່ຽວກັບຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ວິທີການເກັບສະຖິຕິ ແມ່ນປະຕິບັດຕາມຕາຕະລາງຊ້ອນທ້າຍ ຄຳແນະນຳສະບັບນີ້.

## ໝວດທີ 4
## ຂັ້ນຕອນການດຳເນີນຄະດີ ການຟອກເງິນ ແລະ ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ຂອງສານ

ມາດຕາ 16 ຂັ້ນຕອນການດຳເນີນຄະດີຂອງສານ

ຂັ້ນຕອນໃນການດຳເນີນຄະດີ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ນັ້ນ ສານຂັ້ນຕົ້ນ, ຂັ້ນອຸທອນ, ຂັ້ນລົບລ້າງ ຫຼື ຂັ້ນຮື້ຟື້ນ ໃຫ້ປະຕິບັດຕາມ ພາກທີ VIII, IX, X ແລະ XII ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ 2017.

ມາດຕາ 17 ການຮັບ ແລະ ກຳນົດເວລາໃນການພິຈາລະນາຕັດສິນ

ການຮັບ ແລະ ກຳນົດເວລາໃນການພິຈາລະນາຕັດສິນ ໃຫ້ປະຕິບັດຕາມມາດຕາ 164 ແລະ 165 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ 2017.

ໃນການດຳເນີນຄະດີ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ນັ້ນ ສານມີສິດນຳໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ຕາມທີ່ກຳນົດໄວ້ໃນມາດຕາ 166 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ 2017, ໃນກໍລະນີ ທີ່ທຶນ ແລະ ຊັບສິນອື່ນ ທີ່ຕິດພັນກັບຄະດີການຟອກເງິນ ຫຼື ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ທີ່ຍັງບໍ່ຖືກຍຶດ ຫຼື ອາຍັດ ສານຕ້ອງອອກຄຳສັ່ງຍຶດ ຫຼື ອາຍັດ ຕາມແຕ່ກໍລະນີ.

ມາດຕາ 18 ການດຳເນີນຄະດີຂອງສານຂັ້ນຕົ້ນ

ການດຳເນີນຄະດີ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ໂດຍສານຂັ້ນຕົ້ນ ໃຫ້ປະຕິບັດຕາມ ພາກທີ IX ໝວດ ຂອງກົດໝາຍ ວ່າດ້ວຍການດຳເນີນ ຄະດີອາຍາ ສະບັບປັບປຸງ 2017.



Scanned by CamScanner

ມາດຕາ 19 ການພິຈາລະນາຕັດສິນຄະດີຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ໃນການພິຈາລະນາຕັດສິນລົງໂທດ ຈຳເລີຍໃນຂໍ້ກ່າວຫາ ການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຕ້ອງໄດ້ວິນິດໄສ ກ່ຽວກັບ ການກຳນົດໂທດ ໃສ່ການກະທຳຜິດຕົ້ນ ແລະ ການກະທຳຜິດໃນສະຖານຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຢ່າງລະອຽດ, ຈະແຈ້ງ ຕາມຫຼັກການລວມຂອງການວາງໂທດ ຕາມທີ່ກຳນົດໄວ້ໃນປະມວນກົດໝາຍອາຍາ ສະບັບປີ 2017.

ການກຳນົດໂທດຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ປະຕິບັດຕາມມາດຕາ 130 ແລະ 131 ຂອງປະມວນກົດໝາຍອາຍາ ສະບັບປີ 2017.

ມາດຕາ 20 ການເກັບກຳສະຖິຕິ ການຕັດສິນຄະດີຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ວິທີການເກັບສະຖິຕິ ແມ່ນປະຕິບັດຕາມຕາຕະລາງຊ້ອນທ້າຍ ຄຳແນະນຳສະບັບນີ້.

ມາດຕາ 21 ການອອກຄຳສັ່ງນຳເອົາຄຳຕັດສິນ ຄະດີຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ໃຊ້ໄດ້ຢ່າງເດັດຂາດ ເພື່ອຈັດຕັ້ງປະຕິບັດ

ການອອກຄຳສັ່ງນຳເອົາຄຳຕັດສິນ ຄະດີຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ປະຕິບັດຕາມມາດຕາ 236, 240, 246 ແລະ 247 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງປີ 2017.

## ໝວດທີ 5
## ການຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ

ມາດຕາ 22 ການປະຕິບັດໂທດຕັດອິດສະລະພາບ ແລະ ໂທດອື່ນ

ການປະຕິບັດໂທດຕັດອິດສະລະພາບ ແລະ ໂທດອື່ນ ໃຫ້ປະຕິບັດຕາມທີ່ໄດກຳນົດໄວ້ມາດຕາ 240, 241, 243 ແລະ 245 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງປີ 2017.

ສຳລັບລະບຽບການ ແລະ ຂັ້ນຕອນການປະຕິບັດໂທດປະຫານຊີວິດ ປະຕິບັດຕາມມາດຕາ 255 ແລະ 256 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງປີ 2017, ບົດບັນທຶກ ແລະ ນິຕິກຳອື່ນທີ່ໄດ້ກຳນົດກ່ຽວກັບຂັ້ນຕອນ ແລະ ລະບຽບການປະຕິບັດໂທດ.

ການປະຕິບັດໂທດໃນຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ກໍໃຫ້ປະຕິບັດເຊັ່ນດຽວກັນກັບທີ່ກຳນົດໄວ້ຂ້າງເທິງນີ້.

ມາດຕາ 23 ການປະຕິບັດໂທດປັບໄໝ, ຮິບຊັບ, ໂທດຮິບວັດຖຸສິ່ງຂອງ ແລະ ການໃຊ້ແທນຄ່າເສຍຫາຍ

ການປະຕິບັດໂທດປັບໄໝ, ຮິບຊັບ, ໂທດຮິບວັດຖຸສິ່ງຂອງ ແລະ ການໃຊ້ແທນຄ່າເສຍຫາຍໃຫ້ປະຕິບັດຕາມມາດຕາ 246 ແລະ 247 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງປີ 2017 ແລະ ນິຕິກຳອື່ນ ທີ່ກ່ຽວຂ້ອງ.



Scanned by CamScanner

ມາດຕາ 24 ການເກັບສະຖິຕິ ການຈັດຕັ້ງປະຕິບັດຄຳຕັດສິນຄະດີຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ

ວິທີການເກັບສະຖິຕິ ແມ່ນປະຕິບັດຕາມຕາຕະລາງຊ້ອນທ້າຍ ຄຳແນະນຳສະບັບນີ້.

**ໝວດທີ 6**

**ບົດບັນຍັດສຸດທ້າຍ**

ມາດຕາ 25 ການຈັດຕັ້ງປະຕິບັດ

ມອບໃຫ້ ອົງການສືບສວນ-ສອບສວນ, ອົງການໄອຍະການ, ສານ ແລະ ກະຊວງຍຸຕິທຳ ປະສານສົມທົບ ແລະ ເຮັດວຽກຮ່ວມກັນ ເພື່ອປຶກສາຫາລື ກົນໄກການຈັດຕັ້ງປະຕິບັດຕົວຈິງ ໃຫ້ເປັນຮູບປະທຳ ແລະ ມີປະສິດທິຜົນ.

ບັນດາກະຊວງ ແລະ ອົງການຈັດຕັ້ງ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຄຳສັ່ງແນະນຳສະບັບນີ້ ໃຫ້ໄດ້ຮັບຜົນດີ ແລະ ລາຍງານສະພາບໃຫ້ລັດຖະບານຊາບໃນແຕ່ລະໄລຍະ.

ມາດຕາ 26 ຜົນສັກສິດ

ຄຳສັ່ງແນະນຳ ສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ່ລົງລາຍເຊັນ ເປັນຕົ້ນໄປ.

**ປະທານຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ**
**ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ**

ສົມດີ ດວງດີ



Scanned by CamScanner